# ທະນາຄານ ແຄນນາເດຍ ລາວ ຈຳກັດ

ເອກະສານລາຍງານການເງິນ

ໃນໄລຍະແຕ່ວັນທີ 1 ກັນຍາ 2015 (ມື້ສ້າງຕັ້ງ) ເຖິງ ວັນທີ 31 ທັນວາ 2015

# ທະນາຄານ ແຄນນາເດຍ ລາວ ຈຳກັດ

## ສາລະບານ


| | ໜ້າ |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງຄະນະອຳນວຍການ | 2 |
| ເອກະສານລາຍງານຂອງນັກກວດສອບອິດສະຫຼະ | 3 - 4 |
| ໃບລາຍງານຜົນໄດ້ຮັບ | 5 - 6 |
| ໃບສະຫຼຸບຊັບສິນບັດ | 7 - 9 |
| ໃບລາຍງານສ່ວນປ່ຽນແປງທຶນຕົນເອງ | 10 |
| ໃບລາຍງານກະແສເງິນສົດ | 11 - 12 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 13 - 29 |

# ທະນາຄານ ແຄນນາເດຍ ລາວ ຈຳກັດ
## ຂໍ້ມູນທົ່ວໄປ

### ທະນາຄານ

ທະນາຄານ ແຄນນາເດຍ ລາວ ຈຳກັດ ("ທະນາຄານ") ແມ່ນທຸລະກິດໃນເຄືອຂອງ ທະນາຄານ ແຄນນາເດຍ ມະຫາຊົນ. ທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ທະນາຄານດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ສະບັບເລກທີ 28/ທຫລ ເຊິ່ງວາງອອກໂດຍ ທະນາຄານ ແຫ່ງ ສປປລາວ (“ທຫລ”) ລົງວັນທີ 14 ສິງຫາ 2015.

ທຶນຈົດທະບຽນໃນເບື້ອງຕົ້ນຂອງທະນາຄານແມ່ນ 300,000,000,000 ກີບ. ນະວັນທີ 31 ທັນວາ 2015, ທຶນຈົດທະບຽນທີ່ຖອກແລ້ວຂອງທະນາຄານແມ່ນ 300,000,000,000 ກີບ (ທຽບເທົ່າ 36,746,693 ໂດລາ).

ການເຄື່ອນໄຫວຕົ້ນຕໍຂອງທະນາຄານ ແມ່ນໃຫ້ບໍລິການທາງດ້ານການທະນາຄານທົ່ວໄປ ແລະ ບໍລິການທາງການເງິນຕ່າງໆໃນ ສປປ ລາວ.

ທະນາຄານຕັ້ງຢູ່ ຖະໜົນ ປາງຄຳ, ບ້ານ ຊຽງຍືນ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.

### ຄະນະອຳນວຍການ

ສະມາຊິກຂອງຄະນະອຳນວຍການ ໃນໄລຍະແຕ່ວັນທີ 01 ກັນຍາ 2015 ເຖິງ ວັນທີເອກະສານລາຍງານການເງິນສະບັບນີ້ ລວມມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ Pung Kheav Se | ປະທານ | ແຕ່ງຕັ້ງ ວັນທີ 21 ມີນາ 2014 |
| ທ່ານ Lor Chee Leng | ຮອງປະທານ | ແຕ່ງຕັ້ງ ວັນທີ 21 ມີນາ 2014 |
| ທ່ານ Dethphouvang Moularath | ຜູ້ອຳນວຍການ | ແຕ່ງຕັ້ງ ວັນທີ 1 ກັນຍາ 2015 |
| ທ່ານ Lee Hong | ຮອງຜູ້ອຳນວຍການ | ແຕ່ງຕັ້ງ ວັນທີ 1 ກັນຍາ 2015 |
| ທ່ານ Ou Sophanarith | ສະມາຊິກ | ແຕ່ງຕັ້ງ ວັນທີ 21 ມີນາ 2014 |
| ທ່ານ Charles Chuon Vann | ສະມາຊິກ | ແຕ່ງຕັ້ງ ວັນທີ 21 ມີນາ 2014 |
| ທ່ານ Song Khenglay | ສະມາຊິກ | ແຕ່ງຕັ້ງ ວັນທີ 21 ມີນາ 2014 |

### ສະພາບໍລິຫານ

ສະມາຊິກຂອງຄະນະສະພາບໍລິຫານ ໃນໄລຍະແຕ່ວັນທີ 01 ກັນຍາ 2015 ເຖິງ ວັນທີເອກະສານລາຍງານການເງິນສະບັບນີ້ ລວມມີ:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ Buth Ang | ຜູ້ບໍລິຫານ | ແຕ່ງຕັ້ງ ວັນທີ 6 ມິຖຸນາ 2015 |
| ທ່ານ Thai Nha | ຫົວໜ້າຝ່າຍການເງິນ | ແຕ່ງຕັ້ງ ວັນທີ 9 ທັນວາ 2015 |

### ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງທະນາຄານ ໃນໄລຍະແຕ່ວັນທີ 1 ກັນຍາ 2015 ເຖິງ ວັນທີຂອງເອກະສານລາຍງານການເງິນສະບັບນີ້ ແມ່ນທ່ານ Buth Ang, ຜູ້ບໍລິຫານ.

### ນັກກວດສອບບັນຊີ

ນັກກວດສອບບັນຊີ ຂອງທະນາຄານ ແມ່ນ ບໍລິສັດ ເອິນ ແອນ ຢັງ ລາວ ຈຳກັດ.

## ທະນາຄານ ແຄນນາເດຍ ລາວ ຈໍາກັດ

ບົດລາຍງານຂອງຄະນະອໍານວຍການ

ຄະນະອໍານວຍການຂອງ ທະນາຄານ ແຄນນາເດຍ ລາວ ຈໍາກັດ ຈໍາກັດ ("ທະນາຄານ") ມີຄວາມຍິນດີນໍາສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງທະນາຄານ ນະວັນທີ ແລະ ສໍາລັບແຕ່ໄລຍະວັນທີ 1 ກັນຍາ 2015 ເຖິງ 31 ທັນວາ 2015

**ຄວາມຮັບຜິດຊອບຂອງຄະນະອໍານວຍການຕໍ່ເອກະສານລາຍງານການເງິນ**

ຄະນະອໍານວຍການຂອງທະນາຄານແມ່ນ ມີຄວາມຮັບຜິດຊອບ ໃນການກະກຽມ ເອກະສານລາຍງານການເງິນຂອງແຕ່ລະປີການບັນຊີໃຫ້ຖືກຕ້ອງຕາມຄວາມເປັນຈິງຂອງສາຂາ, ຜົນປະກອບການ ແລະ ກະແສເງິນສົດໃນປີ. ໃນສ້າງເອກະສານລາຍງານການເງິນດັ່ງກ່າວ, ຄະນະອໍານວຍການຂອງທະນາຄານຕ້ອງປະຕິບັດດັ່ງນີ້:

- ຄັດເລືອກເອົາບັນດານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝໍ່າສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງ ໄດ້ຖືກປະຕິບັດໂດຍປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງທີ່ເປີດເຜີຍ ແລະ ອະທິບາຍ ຢູ່ໃນເອກະສານລາຍງານການເງິນ;
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມຕໍ່ເນື່ອງໃນການດໍາເນີນທຸລະກິດ, ຍົກເວັ້ນໃນກໍລະນີທີ່ທະນາຄານຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າທະນາຄານ ຈະບໍ່ສາມາດດໍາເນີນທຸລະກິດຕໍ່ໄປໄດ້.

ຄະນະອໍານວຍການ ຮັບປະກັນວ່າ ບັນດາຂໍ້ມູນທາງການເງິນທີ່ຖືກບັນທຶກໄວ້ນັ້ນ ໄດ້ຖືກສະແດງເຖິງຄວາມຖືກຕ້ອງຢູ່ຕະຫຼອດເວລາ ແລະ ຮັບປະກັນວ່າທຸກໆການບັນທຶກບັນຊີ ແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນໍາໃຊ້. ຄະນະອໍານວຍການຂອງທະນາຄານຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງທະນາຄານ ແລະ ດ້ວຍເຫດນັ້ນຕ້ອງມີຂັ້ນຕອນທີ່ເໝາະສົມເພື່ອປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະອໍານວຍການ ຂໍຢັ້ງຢືນວ່າ ສາຂາໄດ້ປະຕິບັດຕາມຂໍ້ກໍານົດທີ່ ກ່າວມາຂ້າງເທິງໃນການກະກຽມ ເອກະສານລາຍງານການເງິນ ນະວັນທີ ແລະ ສໍາລັບແຕ່ໄລຍະວັນທີ 31 ມີນາ 2015 ເຖິງ 1 ກັນຍາ 2015.

**ຖະແຫລງການຂອງຄະນະອໍານວຍການ**

ຄະນະອໍານວຍການ ມີຄວາມຍິນດີຖະແຫລງການວ່າເອກະສານລາຍງານການເງິນແມ່ນໄດ້ສະແດງພາບພົດອັນຖືກຕ້ອງ ແລະ ມີຄວາມຍຸຕິທໍາກ່ຽວກັບຖານະທາງການເງິນຂອງທະນາຄານ ນະເວລາທ້າຍປີ ວັນທີ 31 ທັນວາ 2015 ລວມທັງຜົນການດໍາເນີນງານຂອງທະນາຄານ ແລະ ກະແສເງິນສົດແຕ່ໄລຍະວັນທີ 1 ກັນຍາ 2015 ເຖິງ 31 ທັນວາ 2015 ອີງຕາມກົດໝາຍບັນຊີຂອງ ສປປ ລາວ ແລະ ລະບຽບທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ.

ໃນນາມ ແລະ ຕາງໜ້າຂອງຄະນະອໍານວຍການ:

ທະນາຄານ ແຫ່ງ ສປປ ລາວ ທະນາຄານ ແຄນນາເດຍລາວ ຈໍາກັດ CANADIA BANK LAO CO.,LTD ນະຄອນຫລວງວຽງຈັນ

ທ່ານ Buth Ang
ຜູ້ບໍລິຫານ

ນະຄອນຫລວງວຽງຈັນ, ສປປ ລາວ

15 ມີນາ 2016

ເລກທີອ້າງອີງ: 61175025/17538958

# ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ເຈົ້າຂອງ ທະນາຄານ ແຄນນາເດຍ ລາວ ຈຳກັດ**

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບ ເອກະສານລາຍງານການເງິນຂອງ ທະນາຄານ ແຄນນາເດຍ ລາວ ຈຳກັດ ("ທະນາຄານ") ເຊິ່ງປະກອບດ້ວຍໃບສະຫຼຸບຊັບສິນບັດ ນະວັນທີ 31 ທັນວາ 2015, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນຕົນເອງ ແລະ ໃບລາຍງານກະແສເງິນສົດໃນໄລຍະແຕ່ວັນທີ 1 ກັນຍາ 2015 ເຖິງ 31 ທັນວາ 2015 ແລະ ບົດສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນອື່ນໆ ເຊິ່ງລາຍງານ ຢູ່ໜ້າ 5 ຫາ 29.

*ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນ*

ຄະນະອຳນວຍການຂອງທະນາຄານ ແມ່ນຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນໃຫ້ຖືກຕ້ອງ ໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ, ລະບຽບການທີ່ວາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ ແລະ ການຄວບຄຸມພາຍໃນທີ່ຄະນະອຳນວຍການເຫັນວ່າມີຄວາມຈຳເປັນເພື່ອ ແລະ ນຳສະເໜີເອກະສານລາຍງານການເງິນທີ່ຖືກຕ້ອງ ເຊິ່ງປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ອັນເນື່ອງມາຈາກການສໍ້ໂກງ ຫລື ຍ້ອນຄວາມຜິດພາດຕ່າງໆ.

*ຄວາມຮັບຜິດຊອບຂອງນັກກວດສອບອິດສະຫຼະ*

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ແມ່ນອອກຄຳເຫັນຕໍ່ກັບເອກະສານລາຍງານການເງິນເຫຼົ່ານີ້ບົນພື້ນຖານຜົນການກວດສອບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ. ມາດຕະຖານເຫຼົ່ານັ້ນຮຽກຮ້ອງໃຫ້ພວກຂ້າພະເຈົ້າປະຕິບັດຕາມຂໍ້ບັງຄັບດ້ານຈັນຍາບັນ, ວາງແຜນ ແລະ ດຳເນີນການກວດສອບເພື່ອໃຫ້ໄດ້ຮັບຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນ ແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ.

ການກວດສອບລວມມີ ຂັ້ນຕອນການດຳເນີນການຕ່າງໆເພື່ອເກັບກຳຫຼັກຖານຢັ້ງຢືນຄວາມຖືກຕ້ອງຂອງຈຳນວນເງິນ ແລະ ການເປີດເຜີຍຂໍ້ມູນໃນເອກະສານລາຍງານການເງິນ. ຂັ້ນຕອນການຄັດເລືອກຂຶ້ນກັບການພິຈາລະນາຂອງທີມງານນັກກວດສອບ, ເຊິ່ງລວມເຖິງການປະເມີນຄວາມສ່ຽງຂໍ້ຜິດພາດອັນໃຫຍ່ຫຼວງໃນເອກະສານລາຍງານການເງິນ ບໍ່ວ່າເກີດຈາກການສໍ້ໂກງ ຫຼື ຄວາມຜິດພາດຕ່າງໆ. ໃນການປະເມີນຄວາມສ່ຽງເຫຼົ່ານັ້ນນັກກວດສອບໄດ້ພິຈາລະນາເຖິງການຄວບຄຸມພາຍໃນທີ່ພົວພັນເຖິງການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນທີ່ຖືກຕ້ອງ ເພື່ອເປັນແບບແຜນຂັ້ນຕອນການກວດສອບທີ່ສົມເຫດຜົນຕາມສະພາບການ, ແຕ່ບໍ່ແມ່ນຈຸດປະສົງເພື່ອການສະແດງຄວາມເຫັນທີ່ສິ່ງຜົນເຖິງການຄວບຄຸມພາຍໃນຂອງທະນາຄານ. ການກວດສອບໄດ້ລວມເອົາທັງການປະເມີນນະໂຍບາຍການບັນຊີທີ່ໄດ້ນຳໃຊ້ ແລະ ຄວາມສົມເຫດສົມຜົນໃນການຄາດຄະເນທາງການບັນຊີທີ່ຄະນະອຳນວຍການວາງອອກ, ກໍ່ຄືການປະເມີນທັງໝົດຂອງການນຳສະເໜີເອກະສານລາຍງານການເງິນ.

ພວກຂ້າພະເຈົ້າເຊື່ອວ່າຫຼັກຖານທີ່ໄດ້ມາຈາກການກວດສອບນັ້ນ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານ ໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ

EY

Building a better working world

ຄຳເຫັນ

ໃນຄຳເຫັນຂອງພວກຂ້າພະເຈົ້າເຫັນວ່າ ເອກະສານລາຍງານການເງິນໄດ້ສະແດງຖານະການເງິນອັນຖືກຕ້ອງຕາມຄວາມເປັນຈິງຂອງທະນາຄານ ແຄນນາເດຍ ລາວ ຈຳກັດ, ນະວັນທີ 31 ທັນວາ 2015 ລວມທັງຜົນປະກອບການ ແລະ ກະແສເງິນສົດຂອງທະນາຄານ ສຳລັບໄລຍະແຕ່ວັນທີ 1 ກັນຍາ 2015 ເຖິງ 31 ທັນວາ 2015 ຕາມກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບທີ່ວາງອອກໂດຍ ທຫລ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

Ernst & Young Lao Ltd

ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ
ERNST & YOUNG LAO CO.,LTD

ນະຄອນຫລວງວຽງຈັນ, ສປປ ລາວ

15 ມີນາ 2016

# ທະນາຄານ ແຄນນາເດຍ ລາວ ຈຳກັດ

ໃບລາຍງານຜົນໄດ້ຮັບ

ສຳລັບໄລຍະແຕ່ວັນທີ 1 ກັນຍາ 2015 ເຖິງ 31 ທັນວາ 2015

| *ລຳດັບ* | *ລາຍການ* | *ບົດອະທິບາຍເລກທີ* | *ສຳລັບໄລຍະ ແຕ່ 1 ກັນຍາ 2015 ເຖິງ 31 ທັນວາ 2015 ລ້ານກີບ* |
|---|---|---|---|
| **A.** | **ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ** | | |
| **1.** | **ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **218** |
| 1.1 | ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍລະຫວ່າງທະນາຄານ | | 28 |
| 1.2 | ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກລູກຄ້າ | | 190 |
| **2.** | **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **(16)** |
| 2.1 | ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍສຳລັບທະນາຄານ | | - |
| 2.2 | ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍສຳລັບລູກຄ້າເງິນຝາກ | | (16) |
| **I.** | **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | | **202** |
| **3** | **ລາຍຮັບຈາກຄ່າທຳນຽມ ແລະ ການບໍລິການ** | **4** | **2,820** |
| **4** | **ລາຍຈ່າຍຈາກຄ່າທຳນຽມ ແລະ ການບໍລິການ** | **4** | **(8)** |
| **5** | **ຂາດທຶນສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ** | **5** | **(379)** |
| **II.** | **ລາຍຮັບສຸດທິຈາກການດຳເນີນງານ** | | **2,635** |
| **B** | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | |
| **6** | **ລາຍຮັບອື່ນໆຈາກການດຳເນີນງານ** | | **-** |
| **7** | **ລາຍຈ່າຍຄ່າບໍລິຫານງານ** | | **(1,851)** |
| 7.1 | ເງິນເດືອນ ແລະ ຄ່າໃຊ້ຈ່າຍບຸກຄະລາກອນອື່ນໆ | 6 | (783) |
| 7.2 | ລາຍຈ່າຍອື່ນໆໃນການບໍລິຫານ | 7 | (1,068) |
| **8** | **ຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມ** | | **(2,081)** |
| **9** | **ລາຍຈ່າຍອື່ນໆຈາກການດຳເນີນງານ** | **8** | **(428)** |
| **10** | **ຫັກເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ** | **12.2** | **-** |
| 10.1 | ຫັກເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນເຂົ້າເປັນລາຍຈ່າຍ | | - |

## ທະນາຄານ ແຄນນາເດຍ ລາວ ຈຳກັດ

ໃບລາຍງານຜົນໄດ້ຮັບ (ຕໍ່)

ສຳລັບໄລຍະແຕ່ວັນທີ 1 ກັນຍາ 2015 ເຖິງ 31 ທັນວາ 2015

| *ລຳດັບ* | *ລາຍການ* | *ບົດອະທິບາຍເລກທີ* | *ສຳລັບໄລຍະ ແຕ່ 1 ກັນຍາ 2015 ເຖິງ 31 ທັນວາ 2015 ລ້ານກີບ* |
|---|---|---|---|
| III. | **ລວມຍອດຂາດທຶນກ່ອນອາກອນ** | | **(1,725)** |
| 11 | **ອາກອນກຳໄລປະຈຳປີ** | **18** | **-** |
| IV. | **ຂາດທຶນຫຼັງຫັກອາກອນ** | | **(1,725)** |

ກະກຽມໂດຍ:

ທ່ານ Thai Nha
ຫົວໜ້າຝ່າຍການເງິນ

ອະນຸມັດໂດຍ:

ທ່ານ Buth Ang
ຜູ້ບໍລິຫານ

ນະຄອນຫຼວງວຽງຈັນ, ສປປ ລາວ

15 ມີນາ 2016

# ທະນາຄານ ແຄນນາເດຍ ລາວ ຈໍາກັດ

ໃບສະຫຼຸບຊັບສິນບັດ

ສໍາລັບໄລຍະແຕ່ວັນທີ 1 ກັນຍາ 2015 ເຖິງ 31 ທັນວາ 2015

| *ລໍາດັບ* | *ຊັບສິນ* | *ບົດ ອະທິບາຍ ເລກທີ* | *31 ທັນວາ 2015 ລ້ານກີບ* |
|---|---|---|---|
| **I** | **ເງິນສົດ ແລະ ເງິນຝາກ ຢູ່ ທຫລ** | | **235,762** |
| 1 | ເງິນສົດໃນກໍາມື | 9 | 10,970 |
| 2 | ເງິນຝາກກັບ ທຫລ | 10 | 224,792 |
| **II** | **ໜີ້ຕ້ອງຮັບຈາກທະນາຄານອື່ນ** | | **10,570** |
| 1 | ເງິນຝາກກະແສລາຍວັນ | 11.1 | 3,570 |
| 2 | ເງິນຝາກປະຈໍາ | 11.2 | 7,000 |
| **III** | **ເງິນກູ້ໃຫ້ລູກຄ້າ, ມູນຄ່າສຸດທິເງິນແຮໜີ້ທີ່ບໍ່ເກີດດອກອອກຜົນ** | **12** | **85,655** |
| **IV** | **ຊັບສິນບັດຄົງທີ່** | | **13,067** |
| 1 | ຊັບສິນບັດຄົງທີ່ມີຕົວຕົນ | 13.1 | 6,634 |
| 2 | ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 13.2 | 6,433 |
| **V** | **ຊັບສິນອື່ນໆ** | | **3,578** |
| 1 | ໜີ້ຕ້ອງຮັບ | 14 | 129 |
| 2 | ຊັບສິນອື່ນໆ | 15 | 3,449 |
| | **ລວມຍອດຊັບສິນ** | | **348,632** |

## ທະນາຄານ ແຄນນາເດຍ ລາວ ຈຳກັດ

ໃບສະຫຼຸບຊັບສິນບັດ (ຕໍ່)

ສຳລັບໄລຍະແຕ່ວັນທີ 1 ກັນຍາ 2015 ເຖິງ 31 ທັນວາ 2015

| *ລຳດັບ* | *ໜີ້ສິນ ແລະ ທຶນ* | *ບົດ ອະທິບາຍ ເລກທີ* | *31 ທັນວາ 2015 ລ້ານກີບ* |
|---|---|---|---|
| **I** | **ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ** | | **31,945** |
| 1 | ເງິນກູ້ຢືມຈາກທະນາຄານແມ່ | 16 | 31,945 |
| **II** | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **17** | **17,883** |
| 1 | ເງິນຝາກກະແສລາຍວັນ | | 11,352 |
| 2 | ເງິນຝາກປະຢັດ | | 5,969 |
| 3 | ເງິນຝາກມີກຳນົດ | | 562 |
| **III** | **ໜີ້ສິນອື່ນໆ** | | **101** |
| 1 | ດອກເບ້ຍຄ້າງຈ່າຍ | | 4 |
| 2 | ໜີ້ຕ້ອງສົ່ງອາກອນ | | 29 |
| 3 | ໜີ້ຕ້ອງສົ່ງອື່ນໆ | | 68 |
| | **ລວມຍອດໜີ້ສິນ** | | **49,929** |
| **IV** | **ທຶນຕົນເອງ ແລະ ຄັງສຳຮອງ** | | **298,703** |
| 1 | ທຶນຈົດທະບຽນຖອກແລ້ວ | 19 | 300,000 |
| 2 | ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ | 12.2 | 428 |
| 3 | ຂາດທຶນສະສົມ | | (1,725) |
| | **ລວມຍອດທຶນ** | | **298,703** |
| | **ລວມຍອດໜີ້ສິນ ແລະ ທຶນ** | | **348,632** |

## ທະນາຄານ ແຄນນາເດຍ ລາວ ຈຳກັດ

ໃບສະຫຼຸບຊັບສິນບັດ (ຕໍ່)

ສຳລັບໄລຍະແຕ່ວັນທີ 1 ກັນຍາ 2015 ເຖິງ 31 ທັນວາ 2015

| *ລຳດັບ* | *ລາຍການນອກໃບສະຫຼຸບຊັບສິນບັດ* | *ບົດອະທິບາຍ ເລກທີ* | *31 ທັນວາ 2015 ລ້ານກີບ* |
|---|---|---|---|
| I | **ຫຼັກຊັບຄ້ຳປະກັນ ແລະ ການຈຳນອງ** | | |
| A | **ຫຼັກຊັບຄ້ຳປະກັນ ແລະ ການຈຳນອງເພື່ອກູ້ຢືມ** | | |
| 1 | ຫຼັກຊັບຄ້ຳປະກັນ ແລະ ຊັບຈຳນອງເພື່ອກູ້ຢືມຂອງລູກຄ້າ | | 335,633 |
| | **ລວມຍອດຫຼັກຊັບຄ້ຳປະກັນ ແລະ ການຈຳນອງ** | | **335,633** |

ກະກຽມໂດຍ:

ທະນາຄານ ແຄນນາເດຍລາວ ຈຳກັດ CANADIA BANK LAO CO.,LTD

ທ່ານ Thai Nha

ຫົວໜ້າຝ່າຍການເງິນ

ອະນຸມັດໂດຍ:

ທ່ານ Buth Ang

ຜູ້ບໍລິຫານ

ນະຄອນຫຼວງວຽງຈັນ, ສປປ ລາວ

15 ມິນາ 2016

# ທະນາຄານ ແຄນນາເດຍ ລາວ ຈຳກັດ

ໃບລາຍງານສ່ວນປ່ຽນແປງທຶນຕົນເອງ

ສຳລັບໄລຍະແຕ່ວັນທີ 1 ກັນຍາ 2015 ເຖິງ 31 ທັນວາ 2015

| *ລາຍການ* | *ທຶນຈົດທະບຽນທີ່ຖອກແລ້ວ ລ້ານກີບ* | *ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ ລ້ານກີບ* | *ຂາດທຶນສະສົມ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|
| **ຍອດເຫຼືອນະວັນທີ 1 ກັນຍາ 2015** | **-** | **-** | - | - |
| ທຶນຈົດທະບຽນເພີ່ມເຕີມພາຍໃນປີ | 300,000 | - | - | 300,000 |
| ຂາດທຶນສຸດທິພາຍໃນປີ | - | - | (1,725) | (1,725) |
| ລາຍຈ່າຍເງິນແຮທົ່ວໄປພາຍໃນປີ | - | 428 | - | 428 |
| **ຍອດເຫຼືອນະ ວັນທີ 31 ທັນວາ 2015** | **300,000** | **428** | **(1,725)** | **298,703** |

ກະກຽມໂດຍ:

ທ່ານ Thai Nha

ຫົວໜ້າຝ່າຍການເງິນ

ອະນຸມັດໂດຍ:

ທ່ານ Buth Ang

ຜູ້ບໍລິຫານ

ນະຄອນຫຼວງວຽງຈັນ, ສປປ ລາວ

15 ມີນາ 2016

# ທະນາຄານ ແຄນນາເດຍ ລາວ ຈຳກັດ

ໃບລາຍງານກະແສເງິນສົດ

ສຳລັບໄລຍະແຕ່ວັນທີ 1 ກັນຍາ 2015 ເຖິງ 31 ທັນວາ 2015

| *ລາຍການ* | *ບົດ ອະທິບາຍ ເລກທີ* | *ສຳລັບໄລຍະ ແຕ່ 1 ກັນຍາ 2015 ເຖິງ 31 ທັນວາ 2015 ລ້ານກີບ* |
|---|---|---|
| **ຂາດທຶນສຸດທິກ່ອນອາກອນ** | | **(1,725)** |
| *ດັດແກ້ສຳລັບ:* | | |
| ລາຍຈ່າຍຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມ | | 2,081 |
| ຂາດທຶນສຳລັບລາຍຈ່າຍເງິນແຮ | 12.2 | 428 |
| **ກະແສເງິນສົດໄຫຼອອກກ່ອນການປ່ຽນແປງຂອງຊັບສິນ ແລະ ໜີ້ສິນ** | | **784** |
| (ເພີ່ມຂຶ້ນ)/ຫຼຸດລົງຂອງຊັບສິນຈາກການດຳເນີນງານ | | |
| ເງິນຝາກກັບທະນາຄານອື່ນ | | (142,927) |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | | (85,655) |
| ລາຍຮັບດອກເບ້ຍຄ້າງຮັບ | | (101) |
| ຊັບສິນອື່ນໆ | | (3,477) |
| ເພີ່ມຂຶ້ນ/(ຫຼຸດລົງ)ຂອງໜີ້ສິນຈາກການດຳເນີນງານ | | |
| ໜີ້ຕ້ອງສົ່ງທະນາຄານອື່ນ | | 31,945 |
| ດອກເບ້ຍຄ້າງຈ່າຍ | | 17,883 |
| ໜີ້ສິນອື່ນໆ | | 101 |
| **ກະແສເງິນສົດສຸດທິໃຊ້ເຂົ້າໃນກິດຈະກຳການດຳເນີນງານ** | | **(181,447)** |
| **ກະແສເງິນສົດຈາກກິດຈະກຳການລົງທຶນ** | | |
| ລາຍຈ່າຍເພື່ອຊື້ຊັບສົມບັດຄົງທີ່ ແລະ ອຸປະກອນ | | (15,148) |
| **ກະແສເງິນສົດສຸດທິໃຊ້ເຂົ້າໃນກິດຈະກຳການລົງທຶນ** | | **(15,148)** |
| **ກະແສເງິນສົດຈາກກິດຈະກຳທາງການເງິນ** | | |
| ການປະກອບທຶນ | | 300,000 |
| **ກະແສເງິນສົດສຸດທິຈາກກິດຈະກຳທາງການເງິນ** | | **300,000** |
| **ເພີ່ມຂຶ້ນສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **103,405** |

# ທະນາຄານ ແຄນນາເດຍ ລາວ ຈຳກັດ

ໃບລາຍງານກະແສເງິນສົດ (ຕໍ່)

ສຳລັບໄລຍະແຕ່ວັນທີ 1 ກັນຍາ 2015 ເຖິງ 31 ທັນວາ 2015

| *ລາຍການ* | *ບົດ ອະທິບາຍ ເລກທີ* | *ສຳລັບໄລຍະ ແຕ່ 1 ກັນຍາ 2015 ເຖິງ 31 ທັນວາ 2015 ລ້ານກີບ* |
|---|---|---|
| **ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ** | | - |
| ຜົນກະທົບຈາກສ່ວນຜິດດ່ຽງຈາກການແລກປ່ຽນເງິນຕາຕ່າງປະເທດ | | - |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍໄລຍະ** | **20** | **103,405** |

ກະກຽມໂດຍ:

ທ່ານ Thai Nha

ຫົວໜ້າຝ່າຍການເງິນ

ອະນຸມັດໂດຍ:

ທ່ານ Buth Ang

ຜູ້ບໍລິຫານ

ນະຄອນຫຼວງວຽງຈັນ, ສປປ ລາວ

15 ມີນາ 2016

## 1. ຂໍ້ມູນຂອງທະນາຄານ

*ການສ້າງຕັ້ງ ແລະ ການດຳເນີນງານ*

ທະນາຄານ ແຄນນາເດຍ ລາວ ຈຳກັດ ("ທະນາຄານ") ແມ່ນທຸລະກິດໃນເຄືອຂອງ ທະນາຄານ ແຄນນາເດຍ ມະຫາຊົນ. ທີ່ໄດ້ສ້າງຕັ້ງຂຶ້ນຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ທະນາຄານດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານ ສະບັບເລກທີ 28/ທຫລ ເຊິ່ງວາງອອກໂດຍ ທະນາຄານ ແຫ່ງ ສປປລາວ (“ທຫລ”) ລົງວັນທີ 14 ສິງຫາ 2015.

ການເຄື່ອນໄຫວຕົ້ນຕໍຂອງທະນາຄານ ແມ່ນໃຫ້ບໍລິການທາງດ້ານການທະນາຄານທົ່ວໄປ ແລະ ບໍລິການທາງການເງິນຕ່າງໆໃນ ສປປ ລາວ.

*ຈົດທະບຽນທີ່ຖອກແລ້ວ*

ທຶນຈົດທະບຽນ ໃນເບື້ອງຕົ້ນ ຂອງທະນາຄານ ແມ່ນ LAK 300,000,000,000 ທຶນຈົດທະບຽນຕົວຈິງນະວັນທີ 31 ທັນວາ 2015 ແມ່ນ 300,000,000,000 ກີບ ( ທຽບເທົ່າ 36,746,693 ໂດລາ )

**ຄະນະອຳນວຍການ**

ສະມາຊິກສະພາບໍລິຫານບໍລິຫານພາຍໃນປີຈາກ ວັນທີ 1 ກັນຍາ 2015 ຮອດທີ່ອອກເອກະສານສະບັບນີ້ ມີດັ່ງລຸ່ມນີ້:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| Mr. Pung Kheav Se | ປະທານ | 21 ມີນາ 2014 |
| Mr. Lor Chee Leng | ຮອງປະທານ | 21 ມີນາ 2014 |
| Mr. Dethphouvang Moularath | ຜູ້ອຳນວຍການ | 1 ກັນຍາ 2015 |
| Mr. Lee Hong | ຜູ້ອຳນວຍການ | 1 ກັນຍາ 2015 |
| Mr. Ou Sophanarith | ສະມາຊິກ | 21 ມີນາ 2014 |
| Mr. Charles Chuon Vann | ສະມາຊິກ | 21 ມີນາ 2014 |
| Ms. Song Khenglay | ສະມາຊິກ | 21 ມີນາh 2014 |

**ສະພາບໍລິຫານ**

ສະມາຊິກຂອງຄະນະບໍລິຫານພາຍໃນປີຈາກວັນທີ 1 ກັນຍາ 2015 ຮອດວັນທີ່ອອກເອກະສານສະບັບນີ້ ມີດັ່ງລຸ່ມນີ້:

| *ຊື່* | *ຕຳແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| Mr. Buth Ang | ຜູ້ບໍລິຫານຫ້ອງການ | 6 ມີຖຸນາ 2015 |
| Mr. Thai Nha | ຜູ້ບໍລິຫານຝ່າຍການເງິນ | 9 ທັນວາ 2015 |

**ທີ່ຕັ້ງ**

ທີ່ຕັ້ງຢູ່ຖະໜົນປາງຄຳ, ບ້ານ ຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ.

**ພະນັກງານ**

ພະນັກງານທັງໝົດຂອງສາຂາ ໃນວັນທີ 31 ທັນວາ 2015 ມີທັງໝົດ ແມ່ນ 30 ຄົນ

## 2. ສະຫລຸບນະໂຍບາຍການບັນຊີທີ່ສໍາຄັນ

ນະໂຍບາຍທາງການບັນຊີທີ່ສໍາຄັນທີ່ໄດ້ນໍາໃຊ້ເຂົ້າໃນການກະກຽມເອກະສານລາຍງານການເງິນ ມີດັ່ງນີ້:

### *2.1. ຄໍາຖະແຫຼງການຄວາມສອດຄ່ອງ*

ຜູ່ບໍລິຫານຂອງທະນາຄານ ຂໍ້ຢັ້ງຢືນວ່າໄດ້ກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບກົດໝາຍບັນຊີ ຂອງ ສປປ ລາວ ແລະ ລະບຽບການທີ່ວາງອອກໂດຍ ທຫລ ທີ່ກ່ຽວຂ້ອງກັບການສ້າງ ແລະ ນໍາສະເໜີເອກະສານທາງການເງິນ.

### *2.2. ພື້ນຖານການກະກຽມ*

ທະນາຄານ ໄດ້ກະກຽມເອກະສານລາຍງານການເງິນ ເປັນຫົວໜ່ວຍລ້ານກີບ ຕາມດໍາລັດ ເລກທີ 02/ນຍ ໂດຍນາຍົກລັດຖະມົນຕີແຫ່ງ ສປປ ລາວ ໃນວັນທີ 22 ມີນາ 2000 ແລະ ກົດໝາຍການບັນບັນຊີຂອງ ສປປ ລາວ ແລະ ລະບຽບການບັນຊີອື່ນໆໄດ້ກໍານົດໂດຍ ທຫລ ທີ່ກ່ຽວຂ້ອງກັບການສ້າງ ແລະ ນໍາສະເໜີເອກະສານລາຍງານການເງິນ.

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນໍາໃຊ້ ຫຼັກການບັນຊີ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກ ຍອມຮັບທົ່ວໆໄປໃນ ສປປ ລາວ. ດັ່ງນັ້ນ, ໃບລາຍງານຜົນໄດ້ຮັບ,ໃບສະຫຼຸບຊັບສິນບັດ,ໃບລາຍງານສ່ວນປ່ຽນແປງຂອງທຶນຕົນເອງ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍໃນເອກະສານລາຍງານການເງິນ ແມ່ນບໍ່ໄດ້ສ້າງຂື້ນສໍາລັບທ່ານທີ່ບໍ່ຮູ້ຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງລາວ, ນອກຈາກນັ້ນ ເອກະສານລາຍງານສະບັບນີ້ບໍ່ມີຈຸດປະສົງເພື່ອນໍາສະເໜີຖານະການເງິນຂອງສາຂາ ຜົນຂອງການດໍາເນີນງານ ແລະ ກະແສເງິນສົດອີງຕາມຫຼັກການບັນຊີ ແລະ ການປະຕິບັດການບັນຊີທີ່ຍອມຮັບທົ່ວໆໄປໃນປະເທດອື່ນນອກຈາກ ສປປ ລາວ.

### *2.3. ປີການບັນຊີ*

ປີການບັນຊີຂອງທະນາຄານແມ່ນ ເລີ່ມແຕ່ວັນທີ 1 ກັນຍາ 2015 (ມື້ສ້າງຕັ້ງ) ແລະ ສິ້ນສຸດນະວັນທີ 31 ທັນວາ 2015.

ປີການບັນຊີຕໍ່ມາຂອງທະນາຄານແມ່ນ ເລີ່ມຈາກວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

.

### *2.4. ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ*

ລາຍຮັບ ແລະ ລາຍຈ່າຍດອກເບ້ຍແມ່ນຖືກຮັບຮູ້ຢູ່ໃນໃບລາຍງານຜົນໄດ້ຮັບ ອີງຕາມການຕັ້ງໜີ້ຄ້າງຮັບຄ້າງຈ່າຍ ໂດຍນໍາໃຊ້ວິທີການຄິດໄລ່ແບບສະເໝີຕົວ ແລະ ອັດຕາດອກເບ້ຍແມ່ນໄດ້ຖືກກໍານົດໄວ້ໃນສັນຍາເງິນກູ້/ເງິນຝາກກັບລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກຢຸດຕິກໍ່ຕໍ່ເມື່ອເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ທີ່ບໍ່ເກີດດອກອອກຜົນ (ບົດອະທິບາຍຊ້ອນທ້າຍເລກທີ 2.8 ຄວາມໝາຍຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ) ຫລື ເມື່ອຜູ່ບໍລິຫານເຊື່ອວ່າ ຜູ່ກູ້ຢືມແມ່ນບໍ່ມີຄວາມສາມາດຊໍາລະຄືນດອກເບ້ຍ ແລະ ຕົ້ນທຶນໄດ້. ລາຍຮັບດອກເບ້ຍກ່ຽວກັບເງິນກູ້ແມ່ນໄດ້ຖືກບັນທຶກລົງໃນໃບລາຍງານຜົນໄດ້ຮັບເມື່ອໄດ້ຮັບເງິນຕົວຈິງ.

### *2.5. ການຮັບຮູ້ລາຍຮັບຄ່າທໍານຽມ ແລະ ຄ່າບໍລິການ*

ຄ່າທໍານຽມ ແລະ ຄ່າບໍລິການປະກອບດ້ວຍຄ່າທໍານຽມທີ່ໄດ້ຮັບຈາກການບໍລິການໂອນເງິນ (ລວມມີການຊໍາລະການຄ້າ) ຄ່າທໍານຽມທີ່ເກີດຂື້ນຈາກທຸລະກິດເງິນກູ້.

ຄ່າທໍານຽມ ແລະ ຄ່າບໍລິການແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບບົນພື້ນຖານຫລັກການເງິນສົດ.

2. **ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### *2.6. ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງ ໂດຍມີອາຍຸຄົບກຳນົດຕໍ່າກວ່າ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນທີ່ມີອາຍຸຄົບກຳນົດຕໍ່າກວ່າ ຫຼື ເທົ່າກັບ 30 ວັນ.

### *2.7. ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ*

ເງິນກູ້ໃຫ້ລູກຄ້າແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດຄ້າງຊຳລະລົບໃຫ້ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ.

### *2.8. ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ*

ອີງຕາມຂໍ້ຕົກລົງ ເລກທີ 324/ທຫລ (ທຫລ 324) ລົງວັນທີ 19 ເມສາ 2011, ທະນາຄານຕ້ອງໄດ້ຈັດຊັ້ນເງິນກູ້ ແລະ ຫັກເງິນແຮສຳລັບຄ່າເຊື່ອມມູນຄ່າຂອງເງິນກູ້ດັ່ງນັ້ນ, ເງິນກູ້ແມ່ນຖືກຈັດຊັ້ນເປັນເງິນກູ້ທີ່ເກີດດອກອອກຜົນ ຫລື ເງິນກູ້ທີ່ບໍ່ເກີດດອກອອກຜົນ ອີງຕາມສະຖານະພາບການຊຳລະເງິນທີ່ຍັງຄົງຄ້າງ ແລະ ປັດໃຈທາງດ້ານຄຸນນະພາບອື່ນໆ. ເງິນກູ້ຖືກຈັດຊັ້ນກຸ່ມ (A) ເປັນໜີ້ປົກກະຕິ; ກຸ່ມ (B) ເປັນໜີ້ຄວນເອົາໃຈໃສ່; ແມ່ນຈະຖືກພິຈາລະນາເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕໍ່າກ່ວາມາດຕະຖານ ກຸ່ມ (C) ຫຼື ໜີ້ສົງໃສ ກຸ່ມ (D) ຫຼື ກຸ່ມ (E) ແມ່ນໜີ້ສູນແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ ຫຼື ໜີ້ຕ້ອງຮັບທວງຍາກ.

ອີງຕາມຂໍ້ຕົກລົງ ເລກທີ 324/ທຫລ ເງິນແຮສຳລັບເງິນກູ້ທີ່ເປັນໜີ້ຕ້ອງຮັບທວງຍາກ ແມ່ນໄດ້ຖືກກຳນົດໂດຍການຄິດໄລ່ເອົາຍອດເຫລືອຄ້າງຊຳລະເງິນກູ້ແຕ່ລະລາຍການຄູນໃຫ້ອັດຕາເງິນແຮທີ່ເໝາະສຳລັບການຈັດຊັ້ນເງິນກູ້ນັ້ນໆ ຄືດັ່ງລຸ່ມນີ້:

| *ລຳດັບ* | *ປະເພດ* | *ອັດຕາເງິນແຮສະເພາະ* |
|---|---|---|
| 1 | ໜີ້ປົກກະຕິ | 0% |
| 2 | ໜີ້ຄວນເອົາໃຈໃສ່ | 3% |
| 3 | ໜີ້ຕໍ່າກວ່າມາດຕະຖານ | 20% |
| 4 | ໜີ້ສົງໃສ | 50% |
| 5 | ໜີ້ສູນ | 100% |

ສ່ວນປ່ຽນແປງຂອງເງິນແຮດັ່ງກາວ ແມ່ນຈະໄດ້ຖືກບັນທຶກຢູ່ໃນໃບລາຍງານຜົນໄດ້ຮັບເປັນ "ລາຍຈ່າຍເງິນແຮຄ່າເຊື່ອມໜີ້ຕ້ອງຮັບທວງຍາກ" ຫຼື ເກັບຄືນເງິນແຮຄ່າເຊື່ອມໜີ້ຕ້ອງຮັບທວງຍາກ. ເງິນແຮສຳລັບເງິນກູ້ທີ່ເປັນໜີ້ຕ້ອງຮັບທວງຍາກສະສົມ ແມ່ນຈະຖືກບັນທຶກລົງໃນໃບສະຫລຸບຊັບສົມບັດໃນ " ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (ຫຼັງຫັກເງິນແຮສຳລັບເງິນກູ້ທີ່ເປັນໜີ້ຕ້ອງຮັບທວງຍາກ).

ລາຍລະອຽດກ່ຽວກັບການຈັດຊັ້ນໜີ້ ແລະ ເງິນແຮ ແລະ ມູນຄ່າຂອງເງິນແຮທີ່ບັນທຶກຕົວຈິງໂດຍທະນາຄານ ນະວັນທີ 31 ທັນວາ 2015 ແມ່ນໄດ້ລະບຸຢູ່ໃນເອກະສານຊ້ອນທ້າຍ 12.2.

### *2.9. ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ*

ອີງຕາມ ທຫລ 324 ທະນາຄານຕ້ອງຫັກເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ ໃນອັດຕາ 3.00 % ຂອງຍອດເຫຼືອເງິນກູ້ທີ່ຖືກຈັດຊັ້ນເປັນປະເພດໜີ້ຄວນເອົາໃຈໃສ່ ນະວັນທີສ້າງໃບສະຫລຸບຊັບສົມບັດ ແລະ ຕ້ອງຫັກເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມສຳລັບເງິນກູ້ທີ່ຖືກຈັດປະເພດເປັນ ໜີ້ປົກກະຕິ ແມ່ນອີງຕາມການແຈ້ງການຂອງທະນາຄານ ແຫ່ງ ສປປ ລາວ ທີ່ແຈ້ງອອກໃນແຕ່ລະປີ. ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2015, ອັດຕາເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ, ສຳລັບເງິນກູ້ທີ່ຈັດເປັນປະເພດ ໜີ້ປົກກະຕິ ແມ່ນຢູ່ໃນລະຫວ່າງ 0.5 % ຫາ 1.00 % ອີງຕາມນັງສືທາງການ ເລກທີ 242 / ທຫລ ອອກໂດຍ ທະນາຄານແຫ່ງ ສປປ ລາວ, ລົງວັນທີ 02 ເມສາ 2011 ອີງຕາມຂໍ້ຕົກລົງດັ່ງກ່າວ ທະນາຄານໄດ້ກຳນົດອັດຕາເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມແມ່ນ 0.5 % ຂອງຍອດເຫຼືອຂອງໜີ້ປົກກະຕິ.

2. **ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### *2.9. ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ (ຕໍ່)*

ທະນາຄານໄດ້ປະຕິບັດຕາມຂໍ້ຕົກລົງຂ້າງເທິງຂອງ ທະນາຄານແຫ່ງ ສປປ ລາວ ໃນການຫັກເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ ສຳລັບໜີ້ປົກກະຕິ ແລະ ໜີ້ຄວນເອົາໃຈໃສ່ ສຳລັບໄລຍະແຕ່ວັນທີ 1 ກັນຍາ 2015 ເຖິງ 31 ທັນວາ 2015

ອີງຕາມກົດລະບຽບບັນຊີທີ່ກ່ຽວຂ້ອງ ເຊິ່ງວາງອອກໂດຍ ທະນາຄານ ແຫ່ງ ສປປ ລາວ, ສ່ວນປ່ຽນແປງຂອງເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ ແມ່ນຈະບັນທຶກລົງໃນໃບລາຍຜົນໄດ້ຮັບສະເພາະກິດຈະການສ່ວນເພີ່ມຂຶ້ນຂອງເງິນແຮຈະຖືກບັນທຶກເປັນ " ລາຍຈ່າຍອື່ນໆຈາການດຳເນີນງານ " ແລະ ການຫຼຸດລົງຂອງເງິນແຮດັ່ງກ່າວຈະຖືກບັນທຶກເປັນ " ລາຍຮັບອື່ນໆຈາການດຳເນີນງານ " ແລະ ຍອດເຫຼືອເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມຈະຖືກບັນທຶກຢູ່ໃນໃບສະຫຼຸບຊັບສິນບັດສະເພາະກິດຈະການເປັນ "ເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ" ພາຍໃຕ້ພາກສ່ວນຂອງທຶນ ແລະ ຄັງສຳຮອງຕ່າງໆຂອງທະນາຄານ.

ລາຍລະອຽດຂອງການປ່ຽນແປງເງິນແຮຂອງໜີ້ທີ່ຖືກຈັດຊັ້ນຂອງເງິນແຮທົ່ວໄປສຳລັບການສູນເສຍເງິນກູ້ລວມ ແມ່ນສະແດງຢູ່ໃນບົດອະທິບາຍຊ້ອນທ້າຍ ເລກທີ 12.2.

### *2.10. ຊັບສິນບັດຄົງທີ່*

ຊັບສິນບັດຄົງທີ່ ລວມມີ ຊັບສິນບັດຄົງທີ່ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ. ຊັບສິນບັດຄົງທີ່ມີຕົວຕົນປະກອບມີ ເຄື່ອງໃຊ້ຫ້ອງການ, ເຄື່ອງເຟີນີເຈີ ແລະ ເຄື່ອງຕົບແຕ່ງການປັບປຸງອາຄານ, ແລະ ພາຫະນະ. ຊັບສິນບັດຄົງທີ່ບໍ່ມີຕົວຕົນປະກອບມີຄອມພິວເຕີ ຊອບແວ

ຊັບສິນບັດຄົງ ແມ່ນສະແດງຕາມມູນຄ່າຕົ້ນທຶນ ລົບໃຫ້ ຄ່າຫລຸ້ຍຫ້ຽນສະສົມ; ຖ້າມີ.

ຕົ້ນທຶນຂອງຊັບສິນບັດຕໍ່ກັນໂດຍປະກອບດ້ວຍ ມູນຄ່າຊື້ບວກກັບ ຄ່າໃຊ້ຈ່າຍທີ່ຕິດເພື່ອການເຮັດໃຫ້ຊັບສິນບັດຄົງທີ່ສາມາດນຳໃຊ້ໄດ້.

ລາຍຈ່າຍສຳລັບການຊື້ເພີ່ມເຕີມ, ການປັບປຸງ ແລະ ການຕໍ່ອາຍຸ ແມ່ນຈະຖືກຕີເປັນຕົ້ນທຶນ ແລະ ຄ່າໃຊ້ຈ່າຍ ສຳລັບການບຳລຸງຮັກສາ ແລະ ຄ່າສ້ອມແປງແມ່ນຈະຖືກບັນທຶກຢູ່ໃນໃບລາຍງານຜົນໄດ້ຮັບ.

ເມື່ອຊັບສິນບັດຖືກຂາຍ ຫຼື ໝົດອາຍຸ, ຕົ້ນທຶນ ແລະ ຄ່າຫລຸ້ຍຫ້ຽນສະສົມຈະຖືກສະສາງ ຈາກໃບສະຫລຸບຊັບສິນບັດ ແລະກຳໄລ ຫລື ຂາດທຶນທີ່ມາຈາກການຂາຍອອກທີ່ຖືກບັນທຶກຢູ່ໃນ ໃບລາຍງານຜົນໄດ້ຮັບ.

### *2.11. ຄ່າຫລຸ້ຍຫ້ຽນ ແລະ ຄ່າເຊື່ອມຂອງຊັບສິນບັດຄົງທີ່*

ຄ່າຫລຸ້ຍຫ້ຽນ ແລະ ຄ່າເຊື່ອມຂອງຊັບສິນບັດຄົງທີ່ ແມ່ນຖືກຄິດໄລ່ຕາມວິທີຄິດໄລ່ແບບເສັ້ນຊື່ ໃນອັດຕາທີ່ກຳນົດໃຊ້ຕໍ່ອາຍຸການນຳໃຊ້ທີ່ຄາດຄະເນຂອງຊັບສິນບັດເຫຼົ່ານັ້ນ ອີງຕາມກົດໝາຍສ່ວຍສາອາກອນສະບັບປັບປຸງຂອງ ສປປ ລາວ ເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011, ເຊິ່ງມີຜົນບັງຄັບໃຊ້ໃນ ຫຼື ຫຼັງວັນທີ 1 ມັງກອນ 2013 ກຳນົດໂດຍປະທານສະພາແຫ່ງຊາດອັດຕາໃຊ້ການຫັກຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າປະຈຳປີ ມີດັ່ງນີ້:

| | |
|---|---|
| *ຊັບສິນບັດຄົງທີ່ມີຕົວຕົນ:* | |
| ອາຄານ ແລະ ການປັບປຸງອາຄານ | 5% |
| ອຸປະກອນຫ້ອງການ | 20% |
| ເຟີນີເຈີ ແລະ ເຄື່ອງຕົບແຕ່ງ | 20% |
| ພາຫະນະ | 20% |
| ອຸປະກອນ IT | 20% |
| *ຊັບສິນບັດຄົງທີ່ບໍ່ມີຕົວຕົນ* | |
| ຄ່າໃຊ້ຈ່າຍກ່ອນການສ້າງຕັ້ງວິສາຫະກິດ | 50% |
| ຊອບແວ | 20% |

## 2. ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### *2.12. ຄັງສຳຮອງ*

ພາຍໃຕ້ຂໍ້ກຳນົດຂອງກົດໝາຍວ່າດ້ວຍ ທະນາຄານທຸລະກິດ ລົງວັນທີ 16 ມັງກອນ 2007, ບັນດາທະນາຄານທຸລະກິດຕ້ອງໄດ້ແບ່ງຜົນກຳໄລສຸດທິເພື່ອນຳໄປສ້າງຄັງສຳຮອງຕາມລະບຽບການ ດັ່ງລຸ່ມນີ້:

- ຄັງສຳຮອງຕາມລະບຽບການ
- ຄັງຂະຫຍາຍທຸລະກິດ ແລະ ກອງທຶນອື່ນໆ

ໂດຍອີງຕາມກົດລະບຽບກ່ຽວກັບຄວາມພຽງພໍຂອງທຶນເລກທີ 01/ທຫລ ລົງວັນທີ 28 ສິງຫາ 2011 ໂດຍຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ຄຳແນະນຳໃນການຈັດຕັ້ງປະຕິບັດອື່ນໆ, ບັນດາທະນາຄານທຸລະກິດ ແມ່ນຕ້ອງໄດ້ສ້າງຄັງສຳຮອງຕາມລະບຽບການ ໃນອັດຕາລະຫວ່າງ 5% ຫາ 10% ຂອງກຳໄລຫລັງອາກອນ ໂດຍຂຶ້ນກັບການຕັດສິນໃຈຂອງຄະນະບໍລິຫານ. ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆຄວນຖືກສ້າງຂຶ້ນພາຍໃຕ້ການຕົກລົງຂອງຄະນະບໍລິຫານ. ເນື່ອງຈາກວ່າທະນາຄານມີການຂາດທຶນສະສົມ, ດັ່ງນັ້ນ ທະນາຄານບໍ່ໄດ້ສ້າງຄັງສຳຮອງຕາມລະບຽບການສະພາບໍລິຫານສຳລັບໄລຍະແຕ່ວັນທີ 1 ກັນຍາ 2015 ເຖິງ 31 ທັນວາ 2015.

### *2.13. ລາຍການເຄື່ອນໄຫວທີ່ເປັນເງິນຕາຕ່າງປະເທດ*

ທະນາຄານໄດ້ປະຕິບັດລະບົບການບັນຊີ ແລະ ບັນທຶກທຸກລາຍການເຄື່ອນໄຫວຕາມສະກຸນເງິນເດີມ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນເງິນຕາຕ່າງປະເທດ ໃນທ້າຍປີແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຕາມອັດຕາແລກປ່ຽນໃນມື້ປິດບັນຊີ. (ລາຍລະອຽດອັດຕາແລກປ່ຽນເງິນຕາຕ່າງປະເທດທຽບໃສ່ເງິນກີບໃນວັນທີ 31 ທັນວາ 2015 ໄດ້ສະແດງຢູ່ຂ້າງລຸ່ມນີ້). ລາຍຮັບ ແລະ ລາຍຈ່າຍທີ່ເກີດຈາກການແລກປ່ຽນເງິນຕາຕ່າງປະເທດພາຍໃນປີແມ່ນຖືກປ່ຽນເປັນເງິນກີບໃນທຸກເດືອນດ້ວຍອັດຕາແລກປ່ຽນສະເລ່ຍໃນເດືອນ. ສ່ວນຜິດດ່ຽງເງິນຕາຕ່າງປະເທດທີ່ເກີດຈາກ ການຕີມູນຄ່າຊັບສິນ ແລະ ໜີ້ສິນ ທາງການເງິນໃນມື້ປິດບັນຊີ ຖືກບັນທຶກເຂົ້າໃນ ໃບລາຍງານຜົນໄດ້ຮັບ.

.

| | *31 ທັນວາ 2015* |
|---|---|
| | *ກີບ* |
| ໂດລາສະຫະລັດ | 8,141 |
| ບາດໄທ | 227 |
| ຢວນຈີນ | 1,198 |
| ຢູໂລ | 8,901 |
| ປອນ | 11,983 |
| ດອນລາອົດສະຕາລີ | 5,891 |

### *2.14. ອາກອນ*

ການຄິດໄລ່ເງິນແຮສຳລັບເສຍອາກອນແມ່ນອີງຕາມກຳໄລພາຍໃນປີປະຈຸບັນໂດຍອີງຕາມ ກົດໝາຍສ່ວຍສາອາກອນວ່າດ້ວຍການເກັບອາກອນພາຍໃນ ສປປ ລາວ. ທະນາຄານ ມີພັນທະຕ້ອງຈ່າຍອາກອນໃນອັດຕາ 24% ຂອງກຳໄລທັງໝົດກ່ອນຫັກອາກອນອີງຕາມ ກົດໝາຍສ່ວຍອາກອນສະບັບໃໝ່ ເລກທີ 05 ລົງວັນທີ 20 ທັນວາ 2011 ເຊິ່ງມີຜົນສັກສິດພາຍຫຼັງ ວັນທີ 1 ມັງກອນ 2013. ການແຈ້ງອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ, ເນື່ອງຈາກວ່າກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆໄດ້ຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດເຊິ່ງອາດຈະຕີຄວາມໝາຍທີ່ແຕກຕ່າງກັນ,ຈຳນວນທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

## 2. **ສະຫລຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

### *2.15. ຜົນປະໂຫຍດຂອງພະນັກງານ*

*ຜົນປະໂຫຍດຫລັງການຈ້າງງານ*

ຜົນປະໂຫຍດຫລັງການຈ້າງງານໄດ້ຖືກຈ່າຍໃຫ້ພະນັກງານທີ່ອອກແລ້ວຂອງທະນາຄານ ໂດຍກອງທຶນສະຫວັດດີການສັງຄົມ. ທາງທະນາຄານໄດ້ຈ່າຍຄ່າປະກັນສັງຄົມໃຫ້ແກ່ຕົວແທນປະກັນສັງຄົມໃນອັດຕາ 5.5% ຂອງເງິນເດືອນພື້ນຖານຂອງພະນັກງານແຕ່ລະເດືອນ. ທະນາຄານຈະບໍ່ມີພັນທະອື່ນກ່ຽວກັບຜົນປະໂຫຍດຫລັງການຈ້າງງານ.

*ຜົນປະໂຫຍດເມື່ອອອກການ*

ອີງຕາມມາດຕາ 82 ຂອງກົດໝາຍແຮງງານ ອອກໂດຍປະທານປະເທດ ແຫ່ງ ສປປ ລາວ, ລົງວັນທີ 16 ມັງກອນ 2007, ທະນາຄານ ມີພັນທະຈ່າຍເງິນຊົດເຊີຍໃຫ້ແກ່ພະນັກງານຜູ່ທີ່ລາອອກ ອີງຕາມລາຍ ລະອຽດລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫລື ມີສຸຂະພາບບໍ່ດີ ແລະ ບໍ່ສາມາດສືບຕໍ່ເຮັດວຽກໄດ້;
- ກໍລະນີສາຂາ ພິຈາລະນາວ່າຈຳເປັນຕ້ອງຫລຸດພະນັກງານ ເພື່ອປັບປຸງອົງການຈັດຕັ້ງຂອງການເຮັດວຽກໃນໜ່ວຍງານແຮງງານ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ກ່າວມາຂ້າງເທິງ. ທະນາຄານຕ້ອງຈ່າຍເງິນເບ້ຍລ້ຽງໃຫ້ພະນັກງານໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານທີ່ໄດ້ຮັບກ່ອນການເລີກຈ້າງສຳລັບຜູ້ທີ່ເຮັດວຽກໜ້ອຍກວ່າ 3 ປີ. ສ່ວນພະນັກງານທີ່ເຮັດວຽກຫຼາຍກວ່າ 3 ປີ, ທະນາຄານ ຕ້ອງໄດ້ຈ່າຍເງິນຊົດເຊີຍໃຫ້ ພະນັກງານ ໂດຍຄິດໄລ່ໃນອັດຕາ 15% ຂອງເງິນເດືອນພື້ນຖານຂອງພະນັກງານທີ່ຖືກໄລ່ອອກ ໄດ້ຮັບກ່ອນອອກວຽກ. ນະວັນທີ 31 ທັນວາ 2015, ບໍ່ມີພະນັກງານທະນາຄານຖືກໄລ່ອອກຍ້ອນສາເຫດຂ້າງເທິງ, ດັ່ງນັ້ນ, ທະນາຄານຈຶ່ງບໍ່ໄດ້ຄິດໄລ່ລາຍຈ່າຍສ່ວນນີ້ໄວ້ໃນເອກະສານລາຍງານການເງິນ ຂອງທະນາຄານ.

## 3. ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ

| | *ສຳລັບປີການບັນຊີ ວັນທີ 1 ກັນຍາ 2015 ຫາ ວັນທີ 31 ທັນວາ 2015 ລ້ານກີບ* |
|---|---|
| **ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກ:** | |
| ການເຄື່ອນໄຫວລະຫວ່າງທະນາຄານ | 28 |
| ລາຍຮັບດອກເບ້ຍຈາກເງິນກູ້ໃຫ້ລູກຄ້າ | 190 |
| | **218** |
| **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍສຳລັບ:** | |
| ເງິນຝາກລູກຄ້າ | (16) |
| | **(16)** |
| **ດອກເບ້ຍ ແລະ ຄ້າຍຄືດອກເບ້ຍສຸດທິ** | **202** |

## 4. ລາຍຮັບຈາກຄ່າທຳນຽມ ແລະ ການບໍລິການ

| | *ສຳລັບປີການບັນຊີ ວັນທີ 1 ກັນຍາ 2015 ຫາ ວັນທີ 31 ທັນວາ 2015 ລ້ານກີບ* |
|---|---|
| **ລາຍຮັບຄ່າທຳນຽມ ແລະ ການບໍລິການຈາກ** | |
| ກິດຈະກຳບໍລິຫານທຶນ | 2,820 |
| | **2,820** |
| **ລາຍຈ່າຍຄ່າທຳນຽມ ແລະ ໃຫ້ການບໍລິການຈາກ** | |
| ຄ່າບໍລິການການເຄື່ອນໄຫວລະຫວ່າງທະນາຄານ | 6 |
| ຄ່າທຳນຽມ ແລະ ຄ່າບໍລິການອື່ນ | 2 |
| | **8** |

## 5. ຂາດທຶນສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ

| | *ສຳລັບປີການບັນຊີ ວັນທີ 1 ກັນຍາ 2015 ຫາ ວັນທີ 31 ທັນວາ 2015 ລ້ານກີບ* |
|---|---|
| ສ່ວນຕ່າງກຳໄລຈາກການອັດຕາແລກປ່ຽນທັນທີ | (328) |
| ສ່ວນຕ່າງຂາດທຶນຈາກການອັດຕາແລກປ່ຽນທັນທີ | 707 |
| | **379** |

## 6. ເງິນເດືອນ ແລະ ຄ່າໃຊ້ຈ່າຍບຸກຄະລາກອນອື່ນໆ

| | *ສຳລັບປີການບັນຊີ ວັນທີ 1 ກັນຍາ 2015 ຫາ ວັນທີ 31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ຄ່າແຮງງານເງິນອຸດໜູນ | 782 |
| ຄ່າໃຊ້ຈ່າຍບຸກຄະລາກອນອື່ນໆ | 1 |
| | **783** |

## 7. ຄ່າໃຊ້ຈ່າຍອື່ນໆກໃນການບໍລິຫານ

| | *ສຳລັບປີການບັນຊີ ວັນທີ 1 ກັນຍາ 2015 ຫາ ວັນທີ 31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ຄ່າບໍລິການຈາກພາຍນອກ | 324 |
| ຄ່າໂຄສະນາການຕະຫຼາດ ແລະ ການສົ່ງເສີມ | 74 |
| ຄ່າເຊົ່າຫ້ອງການ | 324 |
| ຄ່າສື່ສານ | 64 |
| ຝຶກອົບຮົມສຳມະນາ ແລະ ຈັດກອງປະຊຸມ | 35 |
| ລາຍຈ່າຍໃນທຸລະກິດທະນາຄານ | 68 |
| ຄ່າທຳນຽມຜູ້ໃຫ້ຄຳປຶກສາ | 158 |
| ລ່າຍຈ່າຍອື່ນໆ | 21 |
| | **1,068** |

## 8. ລາຍຈ່າຍອື່ນໆໃນການດຳເນີນງານ

| | *ສຳລັບປີການບັນຊີ ວັນທີ 1 ກັນຍາ 2015 ຫາ ວັນທີ 31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ເງິນແຮທົ່ວໄປສຳລັບເງິນກູ້ໃຫ້ລູກຄ້າ(*ບົດອະທິບາຍຊ້ອນທ້າຍ 12.2)* | 428 |
| | **428** |

## 9. ເງິນສົດໃນກຳມື

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ເງິນສົດໃນກຳມືເປັນສະກຸນເງິນກີບ | 2,408 |
| ເງິນສົດໃນກຳມືເປັນສະກຸນເງິນຕາຕ່າງປະເທດ | 8,562 |
| | **10,970** |

## 10. ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ

| | *31 ທັນວາ 2015* |
|---|---|
| | *ກີບ* |
| ເງິນຝາກກະແສລາຍວັນ | 88,865 |
| ເງິນແຮຝາກບັງຄັບ | 4,019 |
| ເງິນຝາກຄ້ຳປະກັນທຶນຈົດທະບຽນ | 131,908 |
| | **224,792** |

ຍອດເຫຼືອເງິນຝາກນຳທະນາຄານແຫ່ງ ສ ປປ ລາວ ບໍ່ມີດອກເບ້ຍ.

ພາຍໃຕ້ລະບຽບການຂອງທະນາຄານແຫ່ງ ສປປ ລາວ, ທະນາຄານແມ່ນກຳນົດໃຫ້ຕ້ອງຮັກສາຄັງສຳຮອງເງິນສົດຢູ່ທະນາຄານແຫ່ງ ສປປ ລາວ ໃນຮູບແບບເງິນແຮຝາກບັງຄັບ ເຊິ່ງຄິດໄລ່ໃນອັດຕາ 5.00% ສຳລັບສະກຸນເງິນກີບ ແລະ 10.00% ສຳລັບສະກຸນເງິນຕາຕ່າງປະເທດ, ໂດຍພື້ນຖານ ຄັ້ງຕໍ່ເດືອນ ຢ່າງເປັນປົກກະຕິ 2ຂອງຍອດເງິນຝາກລູກຄ້າທີ່ມີກຳນົດຕ່ຳກ່ວາ 12 ເດືອນ.
ພາຍໃນປີ mtok7koໄດ້ຮັກສາເງິນແຮຝາກບັງຄັບສອດຄ່ອງກັບລະບຽບຂອງ ທະນາຄານແຫ່ງ ສປປ ລາວ.

## 11. *ໜີ້ຕ້ອງຮັບຈາກທະນາຄານອື່ນ*

### *11.1 ເງິນຝາກກະແສລາຍວັນ*

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| **ເງິນຝາກກະແສລາຍວັນຢູ່ພາຍໃນປະເທດ** | |
| ທະນາຄານ ການຄ້າຕ່າງປະເທດ ລາວ ມະຫາຊົນ | 3,277 |
| **ເງິນຝາກກະແສລາຍວັນທະນາຄານຢູ່ຕ່າງປະເທດ** | |
| ທະນາຄານແຄນນາດຽນ | 293 |
| | **3,570** |

### *11.2 ເງິນຝາກມີກຳນົດ*

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| **ເງິນຝາກມີກຳນົດທະນາຄານຢູ່ພາຍໃນປະເທດ** | |
| ທະນາຄານ ການຄ້າຕ່າງປະເທດ ລາວ ມະຫາຊົນ | 7,000 |
| | **7,000** |

**11.2** ເງິນຝາກມີກໍານົດ (ຕໍ່)

| *ທະນາຄານ* | *ສະກຸນເງິນ* | *ກໍານົດ* | *ອັດຕາດອກເບ້ຍ (ເປີເຊັນ)* | *ຍອດເຫຼືອນະວັນທີ 31/12/2015 ລ້ານກີບ* |
|---|---|---|---|---|
| ທະນາຄານ ການຄ້າຕ່າງປະເທດ ລາວ | | | | |
| ມະຫາຊົນ | ກີບ | 12 ເດືອນ | 2.25% | 4,500 |
| | ກີບ | 6 ເດືອນ | 1.75% | 2,500 |
| | | | | **7,000,** |

**12.** ເງິນກູ້ໃຫ້ລູກຄ້າ, ເງິນແຮສຸດທິສໍາລັບເງິນກູ້ທີ່ບໍ່ເກີດດອກອອກຜົນ

| | *31 ທັນວາ 2015 ລ້ານກີບ* |
|---|---|
| ເງິນກູ້ໃຫ້ແກ້ລູກຄ້າ (*ບົດອະທິບາຍເລກທີ 12.1*) | 85,655 |
| ລົບ ເງິນແຮສໍາລັບເງິນກູ້ບໍ່ເກີດດອກອອກຜົນ (*ບົດອະທິບາຍເລກທີ 12.2*) | - |
| | **85,655** |

| | *ສໍາລັບໄລຍະແຕ່ 1 ກັນຍາ 2015 ເຖິງ 31 ທັນວາ 2015 ອັດຕາດອກເບ້ຍ % ຕໍ່ປີ* |
|---|---|
| ເງິນກູ້ ທີ່ເປັນສະກຸນເງິນ ໂດລາ | 9.00% -13.00% |
| ເງິນກູ້ ທີ່ເປັນສະກຸນເງິນ ກີບ | 13.80% - 14.33% |

***12.1*** ***ວິເຄາະເງິນກູ້ໃຫ້ລູກຄ້າ***

*ວິເຄາະຕາມສະກຸນເງິນ*

| | *31 ທັນວາ 2015 ລ້ານກີບ* |
|---|---|
| ເງິນກູ້ ທີ່ເປັນສະກຸນເງິນ ໂດລາ | 57,855 |
| ເງິນກູ້ ທີ່ເປັນສະກຸນເງິນ ກີບ | 27,800 |
| | **85,655** |

*ວິເຄາະຕາມສະພາບເງິນກູ້*

| | *31 ທັນວາ 2015 ລ້ານກີບ* |
|---|---|
| ເງິນກູ້ທີ່ເກີດດອກອອກຜົນ | 85,655 |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | - |
| | **85,655** |

## 12. ເງິນກູ້ໃຫ້ລູກຄ້າ, ເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ (ຕໍ່)

### *12.1 ວິເຄາະເງິນກູ້ໃຫ້ລູກຄ້າ (ຕໍ່)*

*ວິເຄາະຕາມໄລຍະເວລາເດີມ*

| | *31 ທັນວາ 2015*<br>*ລ້ານກີບ* |
|---|---|
| ເງິນກູ້ໄລຍະສັ້ນ | - |
| ເງິນກູ້ໄລຍະກາງ | 85,655 |
| ເງິນກູ້ໄລຍະຍາວ | - |
| | **85,655** |

### *12.2 ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ*

ການເຄື່ອນໄຫວເງິນແຮສຳລັບໜີ້ເສຍຂອງທະນາຄານສຳລັບໄລຍະ ແຕ່ວັນທີ 1 ກັນຍາ 2015 ເຖິງວັນທີ 31 ທັນວາ 2015 ມີດັ່ງນີ້:

| | *ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ*<br>*ລ້ານກີບ* | *ເງິນແຮທົ່ວໄປ*<br>*ລ້ານກີບ* | *ລວມ*<br>*ລ້ານກີບ* |
|---|---|---|---|
| **ຍອດເຫຼືອນະວັນທີ 1 ກັນຍາ 2015** | - | - | - |
| ເງິນແຮທີ່ຫັກເປັນ ລາຍຈ່າຍໃນປີ | - | 428 | 428 |
| ເກັບຄືນເງິນແຮໃນປີ | - | - | - |
| **ຍອດເຫຼືອນະວັນທີ 31 ທັນວາ 2015** | **-** | **428** | **428** |

ລາຍລະອຽດການຈັດຊັ້ນໜີ້ ແລະ ເງິນແຮຕາມຂໍ້ກຳນົດຂອງ ທະນາຄານແຫ່ງ ສປປ ລາວ ນະວັນທີ 31 ທັນວາ 2015 ມີດັ່ງນີ້:

| *ການຈັດຊັ້ນ* | *ຍອດເຫຼືອເງິນກູ້*<br>*ລ້ານກີບ* | *ເງິນແຮສະເພາະ*<br>*ລ້ານກີບ* | *ເງິນແຮທົ່ວໄປ*<br>*ລ້ານກີບ* | *ລວມ*<br>*ລ້ານກີບ* |
|---|---|---|---|---|
| ໜີ້ປົກກະຕິ | 85,655 | - | 428 | 428 |
| ໜີ້ຄວນເອົາໃຈໃສ່ | - | - | - | - |
| ໜີ້ຕໍ່າກວ່າມາດຕະຖານ | - | - | - | - |
| ໜີ້ສົງໃສ | - | - | - | - |
| ໜີ້ສູນ | - | - | - | - |
| **ລວມ** | **85,655** | | **428** | **428** |

## 13. ຊັບສິນບັດຄົງທີ່

### *13.1 ຊັບສິນບັດຄົງທີ່ທີ່ມີຕົວຕົນ*

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ມີຕົວຕົນລະຫວ່າງວັນທີ 1 ກັນຍາ 2015 ເຖິງວັນທີ 31 ທັນວາ 2015 ມີດັ່ງນີ້:

| | *ອາຄານ ແລະ ການປັບປຸງ ລ້ານກີບ* | *ເຄື່ອງໃຊ້ຫ້ອງການ ລ້ານກີບ* | *ເຟີນີເຈີ ແລະ ເຄື່ອງຕົບແຕ່ງ ລ້ານກີບ* | *ພາຫະນະ ລ້ານກີບ* | *ອຸປະກອນໄອທີ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|---|---|---|
| **ຕົ້ນທຶນ:** | - | - | - | - | - | - |
| ນະວັນທີ 1 ກັນຍາ 2015 | 4,065 | 753 | 350 | 327 | 1,990 | 7,485 |
| ຊື້ເຂົ້າໃນປີ | 4,065 | 753 | 350 | 327 | 1,990 | 7,485 |
| ນະວັນທີ 31 ທັນວາ 2015 | | | | | | |
| **ຄ່າຫຼຸ້ຍຫ້ຽນສະສົມ:** | - | - | - | - | - | - |
| ນະວັນທີ 1 ກັນຍາ 2015 | 415 | 88 | 45 | 65 | 238 | 851 |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 415 | 88 | 45 | 65 | 238 | 851 |
| ນະວັນທີ 31 ທັນວາ 2015 | | | | | | |
| **ມູນຄ່າສຸດທິ:** | 3,650 | 665 | 305 | 262 | 1,752 | 6,634 |
| ນະວັນທີ 31 ທັນວາ 2015 | | | | | | |

### *13.2 ຊັບສິນບັດຄົງທີ່ບໍ່ມີຕົວຕົນ*

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນລະຫວ່າງວັນທີ 1 ກັນຍາ 2015 ເຖິງວັນທີ 31 ທັນວາ 2015 ມີດັ່ງນີ້:

| | *ຄ່າໃຊ້ຈ່າຍກ່ອນສ້າງຕັ້ງວິສາຫະກິດ ລ້ານກີບ* | *ຊອບແວ ລ້ານກີບ* | *ລວມ ລ້ານກີບ* |
|---|---|---|---|
| **ຕົ້ນທຶນ:** | | | |
| ນະວັນທີ 1 ກັນຍາ 2015 | - | - | - |
| ຊື້ເຂົ້າໃນປີ | 6,419 | 1,244 | 7,663 |
| ນະວັນທີ 31 ທັນວາ 2015 | 6,419 | 1,244 | 7,663 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | |
| ນະວັນທີ 1 ກັນຍາ 2015 | - | - | - |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 1,076 | 154 | 1,230 |
| ນະວັນທີ 31 ທັນວາ 2015 | 1,076 | 154 | 1,230 |
| **ມູນຄ່າສຸດທິ:** | | | |
| ນະວັນທີ 31 ທັນວາ 2015 | 5,343 | 1,090 | 6,433 |

## 14. ໜີ້ຕ້ອງຮັບ

| | *31 ທັນວາ 2015*<br>*ລ້ານກີບ* |
|---|---|
| ດອກເບ້ຍຄ້າງຮັບຈາກເງິນກູ້ໃຫ້ແກ່ລູກຄ້າ | 101 |
| ດອກເບ້ຍຄ້າງຮັບຈາກເງິນຝາກມີກຳນົດ | 28 |
| | **129** |

## 15. ຊັບສິນອື່ນໆ

| | *31 ທັນວາ 2015*<br>*ລ້ານກີບ* |
|---|---|
| ລາຍຈ່າຍລ່ວງໜ້າ | 3,311 |
| ຊັບສິນອື່ນໆ | 138 |
| | **3,477** |

## 16. ເງິນກູ້ຢືມຈາກທະນາຄານອື່ນ

| | *ຍອດເຫຼືອນະວັນທີ*<br>*31/12/2015*<br>*ລ້ານກີບ* |
|---|---|
| ເງິນຝາກກະແສລາຍວັນຈາກທະນາຄານ ແດນນາເດຍ ມະຫາຊົນ | 31,945 |
| | **31,945** |

ລາຍລະອຽດຂອງເງິນຝາກກະແສລາຍວັນ ນະວັນທີ 31 ທັນວາ 2015 ດັ່ງລຸ່ມນີ້:

| *ສະກຸນເງິນ* | *ໄລຍະເວລາ* | *ຍອດເຫຼືອ ສະກຸນເງິນເດີມ* | *ຍອດເຫຼືອເປັນເງິນກີບ* | *ອັດຕາດອກເບ້ຍ (% ຕໍ່ປີ)* |
|---|---|---|---|---|
| ໂດລາສະຫະລັດ | ເງິນຝາກກະແສລາຍວັນ | 3,923,931 | 31,944,718,770 | 0% |

## 17. ໜີ້ຕ້ອງສົ່ງລູກຄ້າ

ລາຍລະອຽດໜີ້ຕ້ອງສົ່ງລູກຄ້າ ນະວັນທີ 31 ທັນວາ 2015 ມີດັ່ງນີ້:

| | *31 ທັນວາ 2015*<br>*ລ້ານກີບ* |
|---|---|
| **ເງິນຝາກກະແສລາຍວັນ** | **11,352** |
| ເງິນຝາກກະແສລາຍວັນເປັນເງິນກີບ | 11,316 |
| ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ | 36 |
| **ເງິນຝາກປະຢັດ** | **5,969** |
| ເງິນຝາກປະຢັດເປັນເງິນກີບ | 173 |
| ເງິນຝາກປະຢັດເປັນເງິນຕາຕ່າງປະເທດ | 5,796 |
| **ເງິນຝາກປະຈຳ** | **562** |
| ເງິນຝາກປະຈຳເປັນເງິນກີບ | 100 |
| ເງິນຝາກປະຈຳເງິນຕາຕ່າງປະເທດ | 462 |
| | **17,883** |

ອັດຕາດອກເບ້ຍຂອງມູນຄ່າທີ່ຕ້ອງສົ່ງໃຫ້ລູກຄ້າໃນລະຫວ່າງປີມີດັ່ງນີ້:

| | *ທ້າຍປີ*<br>*ວັນທີ 31 ທັນວາ 2015*<br>*ລ້ານກີບ*<br>*ອັດຕາດອກເບ້ຍ % ຕໍ່ປີ* |
|---|---|
| ເງິນຝາກກະແສລາຍວັນເປັນເງິນກີບ | 1.96% - 6.50% |
| ເງິນຝາກກະແສລາຍວັນເປັນເງິນໂດລາ | 1.50% - 5.50% |
| ເງິນຝາກກະແສລາຍວັນເປັນເງິນບາດ | 1.50% - 6.00% |

## 18. ໜີ້ສິນອາກອນ

*ອາກອນກຳໄລ ("PT")*

ທະນາຄານມີພັນທະຕ້ອງຈ່າຍອາກອນໃນອັດຕາ 24% ຈາກກຳໄລ ລວມກ່ອນຫັກອາກອນ ໂດຍສອດຄ່ອງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 05/ສພຊ, ລົງວັນທີ່ 20 ທັນວາ 2011 ເຊິ່ງມີຜົນບັງຄັບໃຊ້ໃນ ຫຼື ຫຼັງວັນທີ 01 ມັງກອນ 2013.

| | *ສຳລັບໄລຍະແຕ່ ວັນທີ 1 ກັນຍາ 2015 ເຖິງ ວັນທີ 31 ທັນວາ 2015 ລ້ານກີບ* |
|---|---|
| ຂາດທຶນກ່ອນອາກອນ | (1,725) |
| **ອາກອນລາຍໄດ້** | **(1,725)** |
| **ລາຍຈ່າຍອາກອນກຳໄລໃນປີ, ຕາມອັດຕາກົດໝາຍ 24%** | **-** |
| ອາກອນກຳໄລທີ່ຕ້ອງຈ່າຍໃນຕົ້ນປີ | - |
| ອາກອນກຳໄລທີ່ໄດ້ຈ່າຍພາຍໃນປີ | - |
| **ອັດຕາອາກອນທີ່ຕ້ອງຈ່າຍນະທ້າຍປີ** | **-** |

ລາຍການເສຍອາກອນຂອງທະນາຄານຂຶ້ນຢູ່ກັບການກວດສອບຂອງເຈົ້າໜ້າທີ່ສ່ວຍສາອາກອນ ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນ ແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເທດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງສຸດທ້າຍຂອງເຈົ້າໜ້າທີ່ສ່ວຍສາອາກອນ.

## 19. ທຶນຈົດທະບຽນຖອກແລ້ວ

ການເຄື່ອນໄຫວ ທຶນຈົດທະບຽນຖອກແລ້ວພາຍໃນປີ ມີດັ່ງນີ້:

:

| | *ສຳລັບໄລຍະແຕ່ວັນທີ 1 ກັນຍາ 2015 ເຖິງ ວັນທີ 31 ທັນວາ 2015 ລ້ານກີບ* |
|---|---|
| ຍອດຍົກມາ | - |
| ທຶນຈົດທະບຽນຖອກເພີ່ມພາຍໃນໄລຍະ | 300,000 |
| **ຍອດເຫຼືອທ້າຍ** | **300,000** |

## 20. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

| | *31 ທັນວາ 2015 ລ້ານກີບ* |
|---|---|
| ເງິນສົດໃນກຳມື | 10,970 |
| ເງິນຝາກກະແສລາຍວັນຢູ່ ທຫລ | 88,865 |
| ເງິນຝາກກະແສລາຍວັນຢູ່ທະນາຄານອື່ນໆ | 3,570 |
| | **103,405** |

## 21. ບັນດາລາຍການເຄື່ອນໄຫວກັບລາຍການພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງແມ່ນທຸກໆລາຍການເຄື່ອນໄຫວທີ່ໄດ້ດຳເນີນງານກັບພາກສ່ວນອື່ນເຊິ່ງມີສາຍພົວພັນກັບສາຂາ, ພາກສ່ວນທີ່ຈະກ່ຽວຂ້ອງກັບສາຂາ ຖ້າຫາກວ່າ:

(a) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ພາກສ່ວນອື່ນຈະຕ້ອງ:

- ມີການຄວບຄຸມ(ຖືກຄວບຄຸມໂດຍ), ຫຼື ພາຍໃຕ້ການຄວບຄຸມທົ່ວໄປກັບສາຂາ (ໃນນີ້ລວມມີບໍລິສັດແມ່, ສາຂາ ແລະ ສະມາຊິກຂອງ ສາຂາ);
- ມີຜົນປະໂຫຍດນຳກັນກັບສາຂາເຊິ່ງສິ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມສາຂາ.

(b) ພາກສ່ວນດັ່ງກ່າວແມ່ນມີຮຸ້ນສ່ວນນຳສາຂາ

(c) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສຳຄັນຂອງຜູ້ບໍລິຫານຫຼັກຂອງສາຂາ ຫຼື ບໍລິສັດແມ່;

(d) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (a) ຫຼື (d);

(e) ພາກສ່ວນທີ່ກ່ຽວຂ້ອງ ກໍ່ແມ່ນຜູ້ທີ່ຄວບຄຸມທະນາຄານ, ມີສ່ວນຮ່ວມໃນການຄວບຄຸມ ຫຼືອິດທິພົນອັນໃຫຍ່ຫຼວງ, ຫຼື ມີສິດທິອຳນາດການໃນການອອກສຽງສ່ວນໃຫຍ່ຕໍ່ ທະນາຄານທີ່ດຳເນີນທຸລະກິດຢູ່, (ໂດຍທາງກົງ ຫຼື ທາງອ້ອມ), ທຸກໆພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້(c) ຫຼື (d); ຫຼື

(f) ພາກສ່ວນທີ່ກ່ຽວຂ້ອງແມ່ນແຜນຜົນປະໂຫຍດພາຍຫຼັງອອກວຽກຂອງພະນັກງານຂອງ ສາຂາ ຫຼື ທະນາຄານ ຫຼື ທະນາຄານອື່ນໆທີ່ມີສາຍພົວພັນກັບສາຂາ.

ການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງໃນວັນທີ 31 ທັນວາ 2015 ມີດັ່ງຕໍ່ໄປນີ້:

| *ພາກສ່ວນທີ່ກ່ຽວຂ້ອງ* | *ສາຍພົວພັນ* | *ທຸລະກຳ* | *31 ທັນວາ 2015 ໜີ້ຕ້ອງຮັບ/(ໜີ້ຕ້ອງສົ່ງ) ລ້ານກີບ* |
|---|---|---|---|
| ທະນາຄານ ແຄນນາເດຍ ມະຫາຊົນ | ເຈົ້າຂອງ | ເງິນຝາກກະແສລາຍວັນຢູ່ ທະນາຄານແມ່ | (31,945) |
| | | ເງິນຝາກກະແສລາຍວັນຢູ່ ທະນາຄານແມ່ | 293 |

ທຸລະກຳທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງໃນລະຫວ່າງປີມີດັ່ງນີ້:

| | *ທຸລະກຳ* | *ສຳລັບໄລຍະແຕ່ວັນທີ 1 ກັນຍາ 2015 ເຖິງ ວັນທີ 31 ທັນວາ 2015 ລ້ານກີບ* |
|---|---|---|
| ທະນາຄານ ແຄນນາເດຍ ມະຫາຊົນ | ຮັບເງິນຝາກ | (31,945) |
| ທະນາຄານ ແຄນນາເດຍ ມະຫາຊົນ | ຝາກເງິນ | 293 |

## 21. ບັນດາລາຍການເຄື່ອນໄຫວກັບລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

***ການເຄື່ອນໄຫວກັບບຸກຄະລາກອນທີ່ສຳຄັນຂອງສາຂາ***

ຜົນຕອບແທນຕໍ່ກັບຄະນະອຳນວຍການມີດັ່ງນີ້:

| | *31 ທັນວາ 2015* |
|---|---|
| | *ລ້ານກີບ* |
| ເງິນເດືອນ | 234 |
| ໂບນັດ | 10 |
| | **244** |

## 22. ເຫດການທີ່ເກີດຂຶ້ນພາຍຫຼັງມື້ປິດບັນຊີ

ນອກຈາກສິ່ງທີ່ໄດ້ເປີດເຜີຍໃນເອກະສານລາຍງານການເງິນສະບັບນີ້, ນະມື້ສ້າງເອກະສານລາຍງານ, ບໍ່ມີເຫດການໃດເກີດຂຶ້ນ ຫລັງຈາກວັນ ທີ 31 ທັນວາ 2015 ທີ່ມີຜົນກະທົບທີ່ມີຜົນກະທົບອັນໃຫຍ່ຫຼວງຕໍ່ຖານະການເງິນຂອງທະນາຄານ ນະວັນທີ 31 ທັນວາ 2015.

ກະກຽມໂດຍ:

ທ່ານ Thai Nha
ຫົວໜ້າການເງິນ

ອະນຸມັດໂດຍ:

ທ່ານ Buth Ang
ຜູ້ບໍລິຫານ

ນະຄອນຫຼວງວຽງຈັນ, ສປປ ລາວ

15 ມີນາ 2016